สาทาລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ກະຊວງໂຍທາທິການ ແລະ ຂົນສົ່ງ                    ເລກທີ 17179 /ຍທຂ

ນະຄອນຫລວງວຽງຈັນ, ວັນທີ 28.12.09.

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການ

## ວ່າດ້ວຍການປົກປັກຮັກສາ ແລະ ບູລະນະທາງຫລວງ

- ອີງຕາມກົດໝາຍ ວ່າດ້ວຍທາງຫລວງ ສະບັບເລກທີ 04/09 /ສພຊ, ລົງວັນທີ 3/4/1999;
- ອີງຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ188/ນຍ, ລົງວັນທີ 03/07/2007 ວ່າດ້ວຍການປັບໃໝ ແລະ ມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການຈະລາຈອນ ທາງບົກ, ການຂົນສົ່ງທາງບົກ ແລະການປົກປັກຮັກສາທາງຫລວງ;
- ອີງຕາມດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22/10/2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະຂົນສົ່ງ;
- ອີງຕາມແຈ້ງການ ກ່ຽວກັບມາດຕະການຕໍ່ຜູ້ລະເມີດຂໍ້ກຳນົດ ວ່າດ້ວຍການອະນຸມັດນ້ຳໜັກລວມສູງສຸດຂອງລົດຂົນສົ່ງແລ່ນຕາມເສັ້ນທາງບົກ ໃນ ສປປລາວ ສະບັບເລກທີ 2157/ຄຂປກ ລົງວັນທີ 04/07/2000;
- ອີງຕາມຂໍ້ກຳນົດ ກ່ຽວກັບການອະນຸມັດນ້ຳໜັກລວມສູງສຸດ ຂອງລົດບັນທຸກ ສະບັບເລກທີ 849/ຄຂປກ, ລົງວັນທີ 5/3/2002;
- ອີງຕາມການຕົກລົງເຫັນດີເປັນເອກະພາບ ຂອງຄະນະນຳກະຊວງ ໂຍທາທິການ ແລະຂົນສົ່ງ.
-

**ລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະຂົນສົ່ງ ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງ ແນໃສ່ຮັກສາຄຸນນະພາບ ຂອງທາງໃຫ້ມີຄວາມທົນທານ, ນຳໃຊ້ໄດ້ຢ່າງສະດວກ, ປອດໄພ, ເປັນປົກກະຕິ, ຍາວນານ ພ້ອມທັງຫລຸດຜ່ອນການສິ້ນເປືອງງົບປະມານຂອງລັດ ໃນການບູລະນະ ຫລື ສ້ອມແປງ ໂດຍບໍ່ສົມເຫດສົມຜົນ.

**ມາດຕາ 2. ພັນທະ ຂອງຜູ້ນຳໃຊ້ທາງຫລວງ**

ບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ທາງຫລວງ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນ ການກໍ່ສ້າງ, ການປົກປັກຮັກສາ ແລະບູລະນະທາງຫລວງ ລວມທັງການຮັກສາຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍໃນການຈະລາຈອນ, ຮັກສາຄວາມສະອາດ, ຄວາມສວຍງາມ ແລະ ສິ່ງແວດລ້ອມ.

## ໝວດທີ 2

## ຫລັກການ ຂອງການປົກປັກຮັກສາ ແລະ ບູລະນະທາງຫລວງ

**ມາດຕາ 3 ຫລັກການ ຂອງການປົກປັກຮັກສາທາງຫລວງ**

ໃນວຽກງານຄຸ້ມຄອງທາງຫລວງນັ້ນ ການປົກປັກຮັກສາ ຖືເປັນວຽກບູລິມະສິດທີ່ສຳຄັນ ຕ້ອງໄດ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ ແລະເປັນປົກກະຕິ ຊຶ່ງມີຫລັກການພື້ນຖານຕົ້ນຕໍດັ່ງນີ້:

1. ຕ້ອງມີການຕິດຕາມ ກວດກາຜູ້ຮັບເໝົາໃນການເກັບ, ກວາດ, ອະນາໄມໜ້າທາງ, ແຄມທາງ, ຮ່ອງລະບາຍນ້ຳ ເພື່ອໃຫ້ໄດ້ປະຕິບັດຢ່າງເປັນປົກກະຕິປະຈຳວັນ. ເມື່ອເຫັນບັນຫາໃດໜຶ່ງທີ່ອາດຈະເປັນອຸປະສັກແກ່ການຈະລາຈອນ, ອາດເຮັດໃຫ້ເກີດອຸປະຕິເຫດ ຫລື ສ້າງຄວາມເສຍຫາຍແກ່ຂົວ-ທາງ ຕ້ອງມີວິທີການແກ້ໄຂໂດຍໄວ;
2. ຕ້ອງມີການກວດກາ ແລະຄວບຄຸມນ້ຳໜັກລວມ ຂອງລົດບັນທຸກແຕ່ລະຄັນ ເກັບກຳສະຖິຕິລົດໜັກທີ່ແລ່ນຜ່ານ ຂົວ-ທາງແຕ່ລະຖ້ຽວ ຫຼື ແຕ່ລະຄັນ ເພື່ອໃຫ້ບັນທຸກນ້ຳໜັກຢ່າງຖືກຕ້ອງຕາມຂໍ້ກຳນົດກ່ຽວກັບການ ອະນຸຍາດນ້ຳໜັກລວມສູງສຸດ ຂອງລົດບັນທຸກ ສະບັບເລກທີ 849 /ຄຂປກ, ລົງວັນທີ 05/03/2002;
3. ຕ້ອງມີການປ້ອງກັນ ແລະ ຫ້າມບຸກຄົນ ຫລື ການຈັດຕັ້ງບໍ່ໃຫ້ນຳໃຊ້ທາງ ລວມທັງຂອບເຂດສະຫງວນຂອງທາງເພື່ອເຮັດກິດຈະການໃດໜຶ່ງທີ່ອາດຈະສ້າງຄວາມເສຍຫາຍແກ່ຂົວ ແລະ ທາງ.

**ມາດຕາ 4. ຫລັກການ ຂອງການບູລະນະທາງຫລວງ**

ໃນວຽກງານຄຸ້ມຄອງທາງຫລວງນັ້ນ ການບູລະນະ ຫລື ການສ້ອມແປງເປັນວຽກສຳຄັນ ທີ່ຈະຕ້ອງປະຕິບັດຕາມປົກກະຕິ, ຕາມກຳນົດເວລາ ຫລື ຕາມພາວະສຸກເສີນ ຊຶ່ງມີຫລັກການຕົ້ນຕໍໂດຍລວມດັ່ງນີ້:

1. ຕ້ອງຮີບຮ້ອນສ້ອມແປງຕັ້ງແຕ່ເວລາທີ່ຍັງມີການເປ່ເພບໍ່ທັນຫລາຍ;
2. ຕ້ອງສ້ອມແປງຈຸດ ຫລື ບ່ອນເປ່ເພແທ້ຈິງ;

3. ທຸກການສ້ອມແປງ ບໍ່ວ່ານ້ອຍ ຫລື ໃຫຍ່ ຕ້ອງປະຕິບັດຕາມການອອກແບບ, ກຳນົດໝາຍ ແລະມາດຕະຖານເຕັກນິກ ກ່ຽວກັບການສ້ອມແປງທາງຢ່າງເຂັ້ມງວດ;
4. ໃນກໍລະນີທີ່ມີການເປ່ເພຢ່າງກະທັນຫັນ ຍ້ອນໄພພິບັດທາງທຳມະຊາດ ຫລື ຍ້ອນສາເຫດອື່ນ ຕ້ອງມີການປະສານສົມທົບກັນ ລະຫວ່າງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທຳການສ້ອມແປງສຸກເສີນ ເພື່ອບໍ່ໃຫ້ການສັນຈອນຢຸດສະງັກ ແລະ ຕ້ອງລາຍງານໃຫ້ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຊາບໂດຍດ່ວນ.

## ໝວດທີ 3
## ການຈັດແບ່ງໜ້າທີ່ ແລະຄວາມຮັບຜິດຊອບ ໃນການ ຈັດຕັ້ງຄຸ້ມຄອງການປົກປັກຮັກສາ ແລະບູລະນະທາງຫລວງ

### ມາດຕາ 5. ການຈັດແບ່ງໜ້າທີ່ ແລະຄວາມຮັບຜິດຊອບ

ພາກສ່ວນຕ່າງໆ ຂອງຂະແໜງການ ຍທຂ ທີ່ໄດ້ຮັບການຈັດແບ່ງ ໜ້າທີ່ ແລະ ຄວາມຮັບຜິດຊອບໃນການປົກປັກຮັກສາ ແລະ ບູລະນະທາງຫລວງ ປະກອບດ້ວຍ:

1. ກົມ ຂົວ-ທາງ;
2. ພະແນກໂຍທາທິການ ແລະຂົນສົ່ງ ແຂວງ, ນະຄອນ;
3. ຫ້ອງການໂຍທາທິການ ແລະຂົນສົ່ງ ເມືອງ, ເທດສະບານ.

### ມາດຕາ6. ໜ້າທີ່ ແລະຄວາມຮັບຜິດຊອບ ຂອງກົມ ຂົວ-ທາງ

ໃນວຽກງານປົກປັກຮັກສາ ແລະບູລະນະທາງຫລວງ ກົມຂົວ-ທາງ ມີໜ້າທີ່ ແລະ ຄວາມຮັບຜິດຊອບດັ່ງນີ້:

1. ຮ່າງແຜນໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ ກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງ ໂດຍປະສານສົມທົບກັບພະແນກ ໂຍທາທິການ ແລະຂົນສົ່ງ ແຂວງ, ນະຄອນຫລວງ ນຳສະເໜີລັດຖະມົນຕີວ່າການ ພິຈາລະນາຮັບຮອງ;
2. ຄົ້ນຄ້ວາລະບຽບການ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍ ກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງ ເພື່ອນຳສະເໜີລັດຖະມົນຕີວ່າການພິຈາລະນາ;
3. ຕິດຕາມ ແລະ ຄວບຄຸມຜູ້ຮັບເໝົາວຽກປົກປັກຮັກສາ ແລະ ບູລະນະທາງຫຼວງໃຫ້ປະຕິບັດຕາມຫຼັກການ ທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 3 ແລະ 4 ຂອງຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ;

4. ລົງຕິດຕາມ ແລະ ຊຸກຍູ້ບັນດາພະແນກ ຍທຂ ເພື່ອໃຫ້ເອົາໃຈໃສ່ໃນການຄວບຄຸມ ແລະ ກວດ ກາຜູ້ຮັບເໝົາ ໃຫ້ດໍາເນີນການປົກປັກຮັກສາທາງຫລວງ ຢ່າງເປັນປົກກະຕິ ແລະ ການສ້ອມແປງໃຫ້ຖືກຕາມສະພາບການເປ່ເພຕົວຈິງ ຂອງທາງ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ກໍານົດໝາຍດ້ານຕ່າງໆ ທີ່ກະຊວງໄດ້ວາງອອກ;

5. ລາຍງານວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງ ໃນຂອບເຂດທົ່ວປະເທດ ໃຫ້ລັດຖະມົນຕີວ່າການຮັບຊາບຢ່າງເປັນປົກກະຕິ ແລະ ຕ້ອງລາຍງານໂດຍດ່ວນເວລາເກີດໄພພິບັດຕ່າງໆ ເຊັ່ນ: ຕອນທາງຂາດ, ນໍ້າຖ້ວມທາງ, ນໍ້າເຊາະທາງ, ດິນ, ຫີນຖະຫລົ່ມ, ຕົ້ນໄມ້ລົ້ມທັບທາງ ແລະ ໄພພິບັດອື່ນໆ ລວມທັງລາຍງານຄວາມຄືບໜ້າໃນການແກ້ໄຂບັນຫາສະເພາະໜ້າ ແລະ ແຜນການຟື້ນຟູບູລະນະຄືນໃໝ່;

6. ພົວພັນ ແລະ ປະສານສົມທົບ ເພື່ອແກ້ໄຂບັນຫາຕ່າງໆ ເປັນຕົ້ນແມ່ນກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງດັ່ງນີ້:

   - <u>ຂະແໜງການຄຸ້ມຄອງທີ່ດິນ:</u> ເພື່ອປ້ອງກັນບໍ່ໃຫ້ການຂຶ້ນທະບຽນທີ່ດິນ ຫຼື ການອອກໃບຢັ້ງຢືນສິດນໍາໃຊ້ທີ່ດິນໃຫ້ແກ່ບຸກຄົນ ຫຼື ການຈັດຕັ້ງ ກວມເອົາຂອບເຂດສະຫງວນຂອງທາງຫລວງແຫ່ງຊາດ, ທີ່ດິນສະຫງວນໄວ້ສ້າງທາງ, ຂົວ, ສະຖານນີລົດຂົນສົ່ງ, ສະຖານນີລົດໄຟ, ທ່າເຮືອ, ສະໜາມບິນ ແລະ ທີ່ດິນຄົມມະນາຄົມອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 30 ແລະ 31 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003;

   - <u>ຂະແໜງການພະລັງງານ ແລະ ບໍ່ແຮ່:</u> ເພື່ອກໍານົດຂອບເຂດ ການຄຸ້ມຄອງແຫຼ່ງວັດສະດຸກໍ່ສ້າງທາງເຊັ່ນ: ດິນ, ຫີນ, ຫີນແຮ່, ຊາຍ ແລະ ວັດສະດຸກໍ່ສ້າງທາງສະນິດອື່ນໃຫ້ສອດຄ່ອງຕາມມາດຕາ 18 ຂອງກົດໝາຍ ວ່າດ້ວຍທາງຫລວງສະບັບເລກທີ 04/99/ສພຊ, ລົງວັນທີ 03/04/2003 ລວມທັງເພື່ອກໍານົດຈຸດທີ່ຕັ້ງເສົາໄຟຟ້າ ແລະ ສິ່ງກໍ່ສ້າງອື່ນໆກ່ຽວກັບລະບົບໄຟຟ້າ ຢູ່ໃນເຂດສະຫງວນແຫ່ງຊາດ;

   - <u>ຂະແໜງກະສິກໍາ ແລະ ປ່າໄມ້:</u> ເພື່ອກໍານົດວິທີການຈັດຕັ້ງປະຕິບັດການກໍ່ສ້າງລະບົບຊົນລະປະທານລຽບແຄມທາງ, ຜ່ານທາງ, ຢູ່ໃນ ຫຼື ຜ່ານຂອບເຂດສະຫງວນ ຂອງທາງຫລວງແຫ່ງຊາດ;

   - <u>ອົງການປົກຄອງແຂວງ, ນະຄອນ ລວມທັງພະແນກ ໂຍທາທິການ ແລະ ຂົນສົ່ງ:</u> ເພື່ອປຶກສາຫາລື, ຄົ້ນຄ້ວາສ້າງແຜນວຽກ ແລະ ງົບປະມານ ສໍາລັບການປົກປັກຮັກສາ, ບູລະນະທາງຫລວງແຫ່ງຊາດ ແລະ ທາງຫລວງທ້ອງຖິ່ນ

ໃນແຕ່ລະໄລຍະ ແລະ ເພື່ອຂໍຄວາມຮ່ວມມືໃນການເຜີຍແຜ່ລະບຽບກົດໝາຍກ່ຽວກັບທາງຫລວງ ພ້ອມທັງປຸກລະດົມປະຊາຊົນໃຫ້ເຂົ້າຮ່ວມໃນວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງຢູ່ໃນທ້ອງຖິ່ນຂອງຕົນ;

7. ຄົ້ນຄ້ວາການຂໍອະນຸຍາດ ຂອງບຸກຄົນ ຫລື ການຈັດຕັ້ງ ໃນການນໍາໃຊ້ຂອບເຂດສະຫງວນ ຂອງທາງຫລວງແຫ່ງຊາດ ໃນວຽກງານຕ່າງໆ ເຊັ່ນ: ການຕັ້ງເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ, ການຂຸດດິນວາງທໍ່ນ້ຳປະປາ, ທໍ່ລະບາຍນ້ຳເປື້ອນ, ຝັງສາຍໄຟຟ້າ, ສາຍໂທລະຄົມມະນາຄົມ, ການກໍ່ສ້າງລະບົບຊົນລະປະທານຂະໜາດໃຫຍ່ ຜ່ານ ຫລື ຢູ່ໃກ້ທາງ, ຢູ່ໃນ ຫລື ຢູ່ໃນຂອບເຂດສະຫງວນ ຂອງທາງຫລວງແຫ່ງຊາດ ແລະ ທາງຫລວງປະເພດອື່ນ ນໍາສະເໜີ ລັດຖະມົນຕີວ່າການພິຈາລະນາຕົກລົງ;
8. ຊຸກຍູ້ການເກັບຄ່າທໍານຽມຕ່າງໆ ເຂົ້າກອງທຶນບູລະນະຮັກສາທາງຫລວງ ແລະ ການຊໍາລະຄ່າວຽກປົກປັກຮັກສາ ແລະ ບູລະນະທາງຫລວງໃຫ້ໄດ້ຕາມຄາດໝາຍ ຂອງແຜນການ;
9. ພົວພັນກັບຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫລືອສໍາລັບນໍາໃຊ້ເຂົ້າໃນການປົກປັກຮັກສາ ແລະ ບູລະນະທາງຫລວງຕາມການຕົກລົງຂອງລັດຖະມົນຕີວ່າການ;
10. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງ.

**ມາດຕາ 7. ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ**

ໃນວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ມີໜ້າທີ່ ແລະຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄ້ວາຂຶ້ນແຜນ ການປົກປັກຮັກສາ ແລະບູລະນະທາງຫລວງ ແຂວງ, ເມືອງ, ເທດສະບານ ລວມທັງທາງຊົນນະບົດ ໃນແຕ່ລະປີ ສະເໜີຕໍ່ອົງການປົກຄອງແຂວງ, ນະຄອນ ເພື່ອພິຈາລະນາເອົາເຂົ້າແຜນພັດທະນາ ເສດຖະກິດ - ສັງຄົມ ຂອງແຂວງ, ນະຄອນ ພ້ອມທັງລາຍງານໃຫ້ກະຊວງ ຍທຂ ຮັບຊາບ;
2. ລົງຕິດຕາມກວດກາທາງດ້ານເຕັກນິກ, ຄຸນນະພາບທາງ ແລະ ຄວບຄຸມຜູ້ຮັບເໝົາວຽກປົກປັກຮັກສາ ແລະບູລະນະທາງ ພ້ອມທັງກວດກາ ແລະ ຄວບຄຸມນ້ຳໜັກລວມຂອງລົດບັນທຸກທີ່ແລ່ນຕາມເສັ້ນທາງຫລວງທ້ອງຖິ່ນ ຂອງຕົນ ລວມທັງທາງ ຫລວງແຫ່ງຊາດຕາມການມອບໝາຍຂອງກະຊວງ ຍທຂ;

3. ລາຍງານໃຫ້ອົງການປົກຄອງແຂວງ, ນະຄອນ ແລະ ກະຊວງ ຍທຂ ໂດຍດ່ວນ ຫາກມີຕອນທາງໃດໜຶ່ງເກີດມີການເປ່ເພ, ເສຍຫາຍໜັກ ຍ້ອນສາຍເຫດໃດກໍຕາມ ລວມທັງແຜນການແກ້ໄຂບັນຫາສະເພາະໜ້າ ແລະແຜນການຟື້ນຟູບູລະນະໃນຕໍ່ໜ້າ;
4. ຄົ້ນຄ້ວາ, ພິຈາລະນາການຂໍອະນຸຍາດ ຂອງບຸກຄົນ ຫລື ການຈັດຕັ້ງໃນການນໍາໃຊ້ຂອບເຂດສະຫງວນ ຂອງທາງຫລວງແຂວງ ໃນວຽກງານຕ່າງໆ ເຊັ່ນ: ການຕັ້ງເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ, ການຂຸດດິນວາງທໍ່ນາປະປາ, ທໍ່ລະບາຍນໍ້າເປື້ອນ, ຝັງສາຍໄຟຟ້າ, ສາຍໂທລະຄົມມະນາຄົມ, ການກໍ່ສ້າງລະບົບຊົນລະປະທານຂະໜາດກາງ ແລະຂະໜາດນ້ອຍ ຜ່ານ ຫລື ຢູ່ໃກ້ທາງ, ຢູ່ໃກ້ ຫລື ຢູ່ໃນຂອບເຂດສະຫງວນ ຂອງທາງ ດັ່ງກ່າວ;
5. ຊຸກຍູ້ການເກັບຄ່າທໍານຽມຕ່າງໆ ຂອງກອງທຶນພັດທະນາທາງຫລວງ ຢູ່ໃນ ແຂວງ, ນະຄອນ ພ້ອມທັງຊຸກຍູ້ການຊໍາລະຄ່າວຽກປົກປັກຮັກສາ ແລະ ບູລະນະທາງຫລວງທ້ອງຖິ່ນ ໃຫ້ໄດ້ຕາມຄາດໝາຍຂອງແຜນການ;
6. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງຕາມການມອບໝາຍ ຂອງກະຊວງ ໂຍທາທິການ ແລະຂົນສົ່ງ.

**ມາດຕາ 8. ໜ້າທີ່ ແລະຄວາມຮັບຜິດຊອບ ຂອງຫ້ອງການ ໂຍທາທິການ ແລະຂົນສົ່ງເມືອງ, ເທດສະບານ**

ໃນວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ ມີໜ້າທີ່ ແລະຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄ້ວາຂື້ນແຜນການປົກປັກຮັກສາ ແລະ ບູລະນະທາງຫລວງ ທີ່ຕົນຮັບຜິດຊອບ ເພື່ອສະເໜີເອົາເຂົ້າໃນແຜນລວມ ຂອງພະແນກ ຍທຂ;
2. ຕິດຕາມກວດກາທາງດ້ານເຕັກນິກ, ຄຸນນະພາບທາງ ແລະ ຄວບຄຸມຜູ້ຮັບເໝົາວຽກປົກປັກຮັກສາ, ບູລະນະທາງຫລວງ ທີ່ຕົນຮັບຜິດຊອບ ພ້ອມທັງລາຍງານໃຫ້ ພະແນກ ຍທຂ ແຂວງ, ນະຄອນ ຢ່າງເປັນປົກກະຕິ ແລະ ລາຍງານໂດຍດ່ວນ ຫາກເຫັນວ່າມີຕອນທາງໃດຫນຶ່ງຢູ່ໃນເມືອງ, ເທດສະບານ ເກີດເປ່ເພ ຫລື ເສຍຫາຍຢ່າງໜັກ ດ້ວຍສາຍເຫດໃດກໍຕາມ;
3. ປະສານສົມທົບ ກັບອົງການປົກຄອງຂັ້ນຕ່າງໆ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຢູ່ໃນເມືອງ, ເທດສະບານ ເພື່ອຄຸ້ມຄອງທີ່ດິນຄົມມະນາຄົມ ຕາມລະບຽບການ ລວມທັງເພື່ອປຸກລະດົມ ປະຊາຊົນໃຫ້ປະກອບສ່ວນໃນວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງ ຢູ່ໃນຂອບເຂດບ້ານ, ເມືອງ, ເທດສະບານ ຂອງຕົນ;
4. ຄົ້ນຄ້ວາພິຈາລະນາຂໍອະນຸຍາດ ຂອງບຸກຄົນ ຫລື ການຈັດຕັ້ງໃນການນໍາໃຊ້ຂອບເຂດສະຫງວນ ຂອງທາງຫລວງ ເມືອງ ແລະ ທາງເທດສະບານ ໃນວຽກງານຕ່າງໆ

ເຊັ່ນ: ການຕັ້ງເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ, ການຂຸດດິນວາງທໍ່ນາປະປາ, ທໍ່ລະບາຍນ້ຳເປື້ອນ, ຝັງສາຍໄຟຟ້າ, ສາຍໂທລະຄົມມະນາຄົມ, ລວມທັງການຂໍອະນຸຍາດຕັ້ງ ຫລື ປຸກຮ້ານ, ຜາມ ຫລື ຈັດສະຖານທີ່ຊົ່ວຄາວ ເພື່ອຈັດພິທີທາງການໃດໜຶ່ງ ຂອງອົງການຈັດຕັ້ງລັດ ຫລື ເຮັດບຸນຕາມປະເພນີ ຂອງປະຊາຊົນ ແລະອື່ນໆ ຢູ່ໃນເຂດສະຫງວນ ຂອງທາງຫລວງທຸກປະເພດ ທີ່ຢູ່ໃນຂອບເຂດເມືອງ, ເທດສະບານຂອງຕົນ;

5. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນກ່ຽວກັບການປົກປັກຮັກສາ ແລະ ບູລະນະທາງຫລວງ ຕາມການມອບໝາຍຂອງພະແນກ ໂຍທາທິການ ແລະຂົນສົ່ງ ແຂວງ, ນະຄອນ.

## ໝວດທີ 4

## ຂໍ້ຫ້າມ

### ມາດຕາ 9. ຂໍ້ຫ້າມທົ່ວໄປ

I. ຫ້າມບຸກຄົນ ຫລື ການຈັດຕັ້ງ ມີການກະທຳຕ່າງໆຢູ່ໜ້າທາງ ແລະ ຂອບເຂດສະຫງວນ ຂອງທາງ ໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ:

1. ປຸກສ້າງເຮືອນ ຫລື ທີພັກອາໃສ, ຮ້ານຂາຍເຄື່ອງ ຢູ່ ໃນຂອບເຂດສະຫງວນຂອງທາງ;
2. ການຕັ້ງເສົາໄຟຟ້າ, ເສົາໂທລະຄົມມະນາຄົມ, ປ້າຍໂຄສະນາ ຢູ່ໃນຂອບເຂດສະຫງວນ ຂອງທາງ;
3. ຂຸດດິນແຄມທາງ ຫລື ຂຸດໜ້າທາງ ເພື່ອວາງທໍ່ນາປະປາ, ທໍ່ສາຍໄຟຟ້າ, ທໍ່ສາຍໂທລະຄົມມະນາຄົມ, ທໍ່ຊົນລະປະທານ, ທໍ່ລະບາຍນ້ຳຂະໜານໄປຕາມແຄມທາງ, ຂ້າມທາງ ລອດພື້ນທາງ ຫລື ຂຸດເປັນຮ່ອງຊົນລະປະທານ ຢູ່ໃນຂອບເຂດສະຫງວນຂອງທາງ;
4. ຖົມດິນຕັນຮ່ອງນ້ຳ ຫລື ໃສ່ທໍ່ຢູ່ຮ່ອງນ້ຳແຄມທາງ ເພື່ອເຮັດທາງ ຫລື ຂົວເຂົ້າເຮືອນ, ບ້ານຫລື ສະຖານທີ່ໃດໜຶ່ງ;
5. ກອງ ຫລື ວາງວັດຖຸ, ສິ່ງຂອງໄວ້ຢູ່ແຄມທາງ ຊຶ່ງອາດສ້າງຄວາມເສຍຫາຍແກ່ໂຄງສ້າງຂອງທາງ, ຕິດຕັ້ງສິ່ງໃດສິ່ງໜຶ່ງຂ້ວາມ ຫລື ກວມເສັ້ນທາງ ຊຶ່ງອາດກີດຂວາງ ຫລື ເປັນອັນຕະລາຍແກ່ການຈະລາຈອນ.

II. ຫ້າມບຸກຄົນ ຫລື ການຈັດຕັ້ງ ມີການກະທຳຕ່າງໆຢູ່ໜ້າທາງ ແລະ ຂອບເຂດສະຫງວນ ຂອງທາງຢ່າງເດັດຂາດ ເຊັ່ນ:

1. ຂຸດ, ຈົກ ຫລື ຕັກເອົາດິນ, ຫີນ, ຫີນແຮ່, ດິນຊາຍ ແລະ ວັດສະດຸອື່ນ ຢູ່ທາງ ຫລືໃນຂອບເຂດສະຫງວນ ຂອງທາງ;
2. ປູກຕົ້ນໄມ້, ປູກພືດຕາມຮ່ອງລະບາຍນ້ຳ, ວາງສິ່ງຂອງກີດຂວາງຮ່ອງລະບາຍນາແຄມທາງ;
3. ດັງໄຟໃສ່ທາງ;
4. ຖອກນ້ຳມັນ ຫລື ຖິ້ມສິ່ງເປິະເປື້ອນໃສ່ທາງ;
5. ໃຊ້ລົດຂົນສົ່ງບັນທຸກເຄື່ອງຂອງທີ່ມີນ້ຳໜັກເກີນກ່ວາທີ່ໄດ້ຮັບອະນຸຍາດຕາມລະບຽບການແລ່ນຜ່ານ ຂົວ-ທາງ;
6. ເຄື່ອນຍ້າຍຍານພາຫະນະເຕີນເຫລັກ ຫລື ຄຽນດ້ວຍໂສ້ເຫລັກໄປຕາມເສັ້ນທາງປູຢາງ ຫລື ເສັ້ນທາງເບຕົງ ໂດຍບໍ່ມີການປ້ອງກັນທີ່ເໝາະສົມ;
7. ເຄື່ອນຍ້າຍວັດຖຸຂະໜາດໃຫຍ່ ແລະ ມີນ້ຳໜັກຫລາຍ ດ້ວຍການເອົາຍານພາຫະນະກົບຈັກໜັກໃດໜຶ່ງລາກແກ່ໄປຕາມໜ້າທາງໂດຍກົງ.

### ມາດຕາ 10 ຂໍ້ຫ້າມສຳລັບພະນັກງານລັດ

ຫ້າມເຈົ້າໜ້າທີ່ ຫລື ພະນັກງານ ຂອງລັດ ທີ່ມີໜ້າທີ່ໃນການປົກປັກຮັກສາ ແລະ ບູລະນະທາງຫລວງ ມີການກະທຳຢ່າງໃດຢ່າງໜຶ່ງ ດັ່ງຕໍ່ໄປນີ້ຢ່າງເດັດຂາດ ເຊັ່ນ:

1. ລະເລີຍຕໍ່ການຕິດຕາມກວດກາຜູ້ຮັບເໝົາ ຫລື ຜູ້ຮັບຈ້າງໃນການເກັບ, ມ້ຽນ, ກວາດ, ອະນາໄມໜ້າທາງ, ແຄມທາງ ແລະ ຮ່ອງລະບາຍນ້ຳຢ່າງເປັນປົກກະຕິ;
2. ລະເລີຍຕໍ່ການຕິດຕາມກວດກາ ແລະ ຄວບຄຸມຜູ້ຮັບເໝົາ ຫລື ຜູ້ຮັບຈ້າງໃນການບູລະນະ ຫລື ສ້ອມແປງທາງຫລວງຢ່າງເປັນປົກກະຕິ;
3. ລະເລີຍຕໍ່ການກວດກາ ແລະຄວບຄຸມນ້ຳໜັກລົດຂົນສົ່ງຢ່າງເຂັ້ມງວດ;
4. ປ່ອຍໃຫ້ບຸກຄົນ ຫລື ການຈັດຕັ້ງເຮັດກິດຈະການ ຫລື ກະທຳການຢ່າງໃດຢ່າງໜຶ່ງຢູ່ທາງ ແລະ ຂອບເຂດສະຫງວນຂອງທາງ ຊຶ່ງສ້າງຄວາມເສຍຫາຍແກ່ທາງ ແລະ ຂອບເຂດສະຫງວນ ຂອງທາງນັ້ນ;
5. ຮັບສິນບົນນຳຜູ້ຮັບເໝົາ ຫລື ຜູ້ຮັບຈ້າງໃນການຄິດໄລ່ເພີ່ມບໍລິມາດ ລວມທັງຄ່າວຽກ ແລະ ເພື່ອໃຫ້ແກ່ຍາວກຳນົດເວລາສຳເລັດວຽກຕາມສັນຍາ.

### ມາດຕາ 11. ຂໍຫ້າມສຳລັບຜູ້ຮັບເໝົາ

ຫ້າມຜູ້ຮັບເໝົາວຽກປົກປັກຮັກສາ ແລະ ບູລະນະທາງຫລວງ ມີການກະທຳຢ່າງໃດຢ່າງໜຶ່ງ ດັ່ງຕໍ່ໄປນີ້ຢ່າງເດັດຂາດ ເຊັ່ນ:

1. ບໍ່ປະຕິບັດຢ່າງຄົບຖ້ວນຕາມຂໍ້ກຳນົດ ຂອງສັນຍາ;

2. ໃຫ້ສິນບົນແກ່ເຈົ້າໜ້າທີ່ ຫລື ພະນັກງານຂອງລັດທີ່ປົກປັກຮັກສາ ແລະ ບູລະນະທາງຫລວງເພື່ອຫລັກໂລບບໍລິມາດ ລວມທັງຄ່າວຽກ ແລະເພື່ອແກ່ຍາວກຳນົດເວລາສຳເລັດວຽກຕາມ ສັນຍາ;
3. ໃຫ້ຜູ້ອື່ນຮັບເໝົາຕໍ່ຊ່ວງ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 12. ນະໂຍບາຍຕໍ່ຜູ້ມີຜົນງານ

ພະນັກງານ ຫລື ເຈົ້າໜ້າທີ່ ຂອງລັດທີ່ເຮັດວຽກຄຸ້ມຄອງ, ປົກປັກຮັກສາ ແລະ ບູລະນະທາງດ້ວຍຄວາມເອົາໃຈໃສ່, ຜູ້ຮັບເໝົາ ຫລື ຜູ້ຮັບຈ້າງປົກປັກຮັກສາ ແລະບູລະນະທາງ ໄດ້ປະຕິບັດວຽກງານຢ່າງມີຄຸນນະພາບ ລວມທັງບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ປະກອບສ່ວນໃນວຽກງານດັ່ງກ່າວ ຈະໄດ້ຮັບການຍ້ອງຍໍ ຫລື ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 13. ມາດຕາຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ກຳນົດໃດໜຶ່ງ ຂອງຂໍ້ຕົກລົງສະບັບນີ້ ຈະຖືກ ສຶກສາອົບຮົມ, ຕັກເຕືອນ, ຖືກປັບໃໝ, ໃຊ້ແທນຄ່າເສຍຫາຍ ຫລື ຖືກລົງໂທດທາງອາຍາແລ້ວແຕ່ກໍລະນີເບົາ ຫລື ໜັກ.

### ມາດຕາ 14. ມາດຕະການສຶກສາອົບຮົມ ແລະຕັກເຕືອນ

ບຸກຄົນ ຫລື ການຈັດຕັ້ງ ທີ່ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ໃນລັກສະນະເບົາບາງເຊັ່ນ: ປຸກຮ້ານ ຫລື ຜາມຊົ່ວຄາວ, ຕັ້ງປ້າຍໂຄສະນາຂະໜາດນ້ອຍຢູ່ຂອບເຂດສະຫງວນຂອງທາງ ແລະ ການລະເມີດທີ່ມີລັກສະນະເບົາບາງອື່ນ ຊຶ່ງບໍ່ເປັນການກະທຳຜິດທາງອາຍາຈະຖືກສຶກສາອົບຮົມ, ຕັກເຕືອນ ພ້ອມທັງໃຫ້ມ້າງ ຫລື ຖອນອອກສິ່ງທີ່ໄດ້ປຸກ ແລະ ຕັ້ງຂຶ້ນນັ້ນ,

### ມາດຕາ 15. ມາດຕະການທາງວິໄນ

ເຈົ້າໜ້າທີ່ ຫລື ພະນັກງານຄຸ້ມຄອງວຽກງານປົກປັກຮັກສາ ແລະ ບູລະນະທາງຫລວງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນແມ່ນຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫລາຍແກ່ຜົນປະໂຫຍດສ່ວນລວມ ເຊັ່ນ: ໃນການບໍ່ເອົາໃຈໃສ່ ໃນການລາຍງານວຽກງານ ຂອງຕົນຢ່າງເປັນປົກກະຕິ, ການບໍ່ເອົາໃຈໃສ່ໃນການຄຸ້ມຄອງຂອບເຂດສະຫງວນ ຂອງທາງ ເຮັດໃຫ້ເກີດມີການລະເມີດໂດຍບຸກຄົນ ຫລື ການ

ຈັດຕັ້ງ ຊຶ່ງສ້າງຄວາມຫຍຸ້ງຍາກໃນການແກ້ໄຂ ຈະຖືກປະຕິບັດວິໄນຕາມລະບຽບການ ເຊັ່ນ: ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ, ເລື່ອນຂັ້ນ ຫລື ຖືກໄລ່ອອກການ ໃນກໍລະນີທີ່ມີການລະເມີດຢ່າງຮ້າຍແຮງ

**ມາດຕາ 16 ມາດຕະການປັບໃໝ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້, ກໍ່ຄວາມເສຍຫາຍແກ່ທາງ ຈະຖືກປັບໃໝຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ເນື່ອງຈາກການກະທຳຕ່າງໆ ເປັນຕົ້ນ:

- ເຮັດໃຫ້ໂຄງປະກອບ, ສິ່ງປະກອບ ຫລື ກິດຈະການປ້ອງກັນຄວາມປອດໄພ ຂອງທາງເປ່ເພ ຫລື ເສຍຫາຍ ເຊັ່ນ: ໜ້າທາງ, ຂົວ, ກຳແພງຕ້ານເຈື່ອນ, ເຄື່ອງໝາຍຈະລາຈອນ, ລະບົບໄຟສັນຍາ, ລະບົບໄຟແສງສະຫວ່າງ, ດອນກາງທາງ, ກິດຈະການປ້ອງກັນຄວາມປອດໄພ ຂອງທາງ ຫລື ສິ່ງອຳນວຍຄວາມສະດວກໃນການຈະລາຈອນອື່ນ;
- ຂົນສົ່ງສິນຄ້າ, ເຄື່ອງຂອງ ໄປຕາມເສັ້ນທາງທຸກປະເພດ ດ້ວຍການນຳໃຊ້ລົດບັນທຸກນ້ຳໜັກເກີນກ່ວາທີ່ໄດ້ຮັບອະນຸຍາດຕາມລະບຽບການ
- ເຄື່ອນຍ້າຍຍານພາຫະນະຕີນເຫລັກ ຫລື ຄຽນດ້ວຍໂສ້ເຫລັກ ຫລື ຍານພາຫະນະກົນຈັກໜັກ ຕາມເສັ້ນທາງປູຢາງ ແລະ ທາງເບຕົງໂດຍບໍ່ມີການປ້ອງກັນທີ່ຖືກຕ້ອງ;
- ເຄື່ອນຍ້າຍວັດຖຸຂະໜາດໃຫຍ່ ແລະ ໜັກດ້ວຍການເອົາລົດລາກແກ່ໄປຕາມໜ້າທາງໂດຍກົງ;
- ສ້າງຄວາມເປິະເປື້ອນແກ່ທາງຫລວງ;

ການບໍ່ປະຕິບັດຢ່າງຄົບຖ້ວນຕາມສັນຍາຮັບເໝົາປົກປັກຮັກສາ ແລະ ບູລະນະທາງຫລວງກໍຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນສັນຍານັ້ນ.

**ມາດຕາ 17. ມາດຕະການທາງແພ່ງ**

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ທາງ ຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ເຊັ່ນ:

- ຂຸດດິນແຄມທາງ, ໜ້າທາງ, ຖົມດິນຕັນຮ່ອງລະບາຍນ້ຳ ວາງສິ່ງຂອງກີດຂວາງຮ່ອງລະບາຍນ້ຳແຄມທາງ, ຂຸດ, ຈົກ, ຕັກເອົາດິນ, ຫີນ ແລະ ວັດສະດຸອື່ນຢູ່ໃນຂອບເຂດສະຫງວນ ຂອງທາງ ຊຶ່ງເຮັດໃຫ້ໂຄງປະກອບ, ສິ່ງປະກອບ ແລະຂອບເຂດສະຫງວນ ຂອງທາງເກີດການເປ່ເພ;
- ກະທຳການອື່ນທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ທາງ.

**ມາດຕາ 18. ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ເຊັ່ນ:

- ເຈົ້າໜ້າທີ່ ຫລື ພະນັກງານຂອງລັດ ທີ່ມີໜ້າທີ່ໃນການປົກປັກຮັກສາ ແລະບູລະນະທາງຫລວງ ຫາກບໍ່ປະຕິບັດໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ ຫລື ໄດ້ປະຕິບັດໜ້າທີ່ ວຽກງານດັ່ງກ່າວ ໂດຍຂາດຄວາມເອົາໃຈໃສ່, ຂາດນ້ຳໃຈຮັບຜິດຊອບ ຊຶ່ງພາໃຫ້ການປົກປັກຮັກສາ ແລະ ບູລະນະສ້ອມແປງທາງ ບໍ່ໄດ້ຄຸນນະພາບຕາມກຳນົດໝາຍ ແລະ ມາດຕະຖານເຕັກນິກ, ຮັບສິນບົນນຳຜູ້ຮັບເໝົາໃນການຄິດໄລ່ເພີ່ມບໍລິມາດ ລວມທັງຄ່າວຽກ ແລະ ເພື່ອແກ່ຍາວເວລາໃນການສຳເລັດວຽກຕາມສັນຍາ;
- ຜູ້ຮັບເໝົາ ຫລື ຜູ້ຮັບຈ້າງທີ່ໃຫ້ສິນບົນແກ່ເຈົ້າໜ້າທີ່ ຫລື ພະນັກງານ ທີ່ປົກປັກຮັກສາ ແລະ ບູລະນະທາງຫລວງ ເພື່ອຈຸດປະສົງດັ່ງກ່າວຂ້າງເທິງນີ້;
- ບຸກຄົນທີ່ໄດ້ທຳລາຍ, ມ້າງເພ ຫລື ສ້າງຄວາມເສຍຫາຍແກ່ໂຄງປະກອບ, ສິ່ງປະກອບ ແລະ ຂອບເຂດສະຫງວນ ຂອງທາງໂດຍເຈດຕະນາ.

## ໝວດທີ 6

## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ກົມຂົວ-ທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນ ແລະຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ກົມຂົວ-ທາງ ອອກບົດແນະນຳເພີ່ມເຕີມທີ່ຈຳເປັນຢ່າງລະອຽດ ເພື່ອຮັບປະກັນ ໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ.

**ມາດຕາ 20. ຜົນບັງຄັບໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ຂໍ້ກຳນົດ ແລະ ລະບຽບການໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ

ສົມມາດ ພົລເສນາ